# ມອບອຸປະກອນການແພດໃຫ້ໂຮງໝໍ ແລະ ສຸກສາລາ ໓ ແຂວງ



☆ ມູນນິທິຟື້ນຟູສຸຂະພາບລາວ (Lao Rehabilitation Foundation,Inc) ໄດ້ນຳອຸປະກອນການແພດຄື: Ultrasound-echography EKG Fetal Doppler Monitoring Nebulizer Oximeter Suction machine Life box delivery set small surgery set Oxygen concentrator/analyzer ແລະ ເຄື່ອງມືທີ່ຈຳເປັນຈຳນວນໜຶ່ງ ລວມມູນຄ່າ 63.590 ໂດລາສະຫະລັດ ຫຼື ປະມານ 508,72 ລ້ານກີບ ໄປມອບໃຫ້ 4 ໂຮງໝໍເມືອງ 1 ໂຮງໝໍທະຫານ ແຂວງໄຊຍະບູລີ 2 ໂຮງໝໍເມືອງ ແລະ 1 ສຸກສາລາ ແຂວງອຸດົມໄຊ 2 ໂຮງໝໍເມືອງ ແຂວງຫຼວງພະບາງ ເພື່ອຊ່ວຍພັດທະນາການບໍລິການກວດ ແລະ ປິ່ນປົວຄົນເຈັບຢູ່ໃນໂຮງໝໍໃຫ້ດີຂຶ້ນ ໂດຍສະເພາະແມ່ມານ ແລະ ເດັກນ້ອຍ ທັງເປັນການສ້າງຄວາມເຂັ້ມແຂງ ແລະ ຍືນຍົງໃຫ້ແກ່ບັນດາໂຮງໝໍເມືອງຂອງ 3 ແຂວງດັ່ງກ່າວ.

ພິທີມອບ-ຮັບອຸປະກອນການແພດ ໄດ້ຈັດຂຶ້ນເມື່ອບໍ່ດົນມານີ້ ຢູ່ບັນດາໂຮງໝໍ ແລະ ສຸກສາລາຂ້າງເທິງ ເຊິ່ງມອບໂດຍທ່ານ Luc Janssens ປະທານ Lao Rehabilitation Foundation,Inc ແລະ ຮັບໂດຍຜູ້ຕາງໜ້າພະແນກສາທາລະນະສຸກ ໂຮງໝໍ ແລະ ສຸກສາລາທີ່ກ່ຽວຂ້ອງ.

ນອກຈາກການມອບ-ຮັບອຸປະກອນການແພດຄັ້ງນີ້ແລ້ວ Lao Rehabilitation Foundation,Inc ຍັງມີແຜນຊ່ວຍເຫຼືອເຄື່ອງມືອຸປະກອນການແພດທີ່ຈຳເປັນ ໃຫ້ບັນດາໂຮງໝໍເມືອງ ແຂວງຫົວພັນ ໃນທ້າຍປີນີ້.